**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ............/ລບ

ນະຄອນຫຼວງວຽງຈັນ, ວັນທີ..........................

**(ຮ່າງ)**

# ດຳລັດ

# ວ່າດ້ວຍກຳລັງສຳຮອງປ້ອງກັນຊາດ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສປປ ລາວ (ສະບັບປັບປຸງ ປີ 2015);
- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ (ສະບັບປັບປຸງ) ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍ ການປ້ອງກັນຊາດ ສະບັບເລກທີ 67/ສພຊ, ລົງວັນທີ 11 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍ ພັນທະປ້ອງກັນຊາດ (ສະບັບປັບປຸງ) ສະບັບເລກທີ 25/ສພຊ, ລົງວັນທີ 13 ທັນວາ 2012;
- ອີງຕາມ ໜັງສືສະເໜີຂອງກະຊວງປ້ອງກັນປະເທດ ສະບັບເລກທີ.............., ລົງວັນທີ ..........................

## ລັດຖະບານ ອອກດຳລັດ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບວຽກງານກຳລັງສຳຮອງ ເພື່ອປະກອບກຳລັງສຳຮອງໃຫ້ແກ່ກຳລັງປະຈຳການໃນກອງທັບ ໃນພາວະສົງຄາມ ຫຼື ສຸກເສີນ, ແນ່ໃສ່ປຸກລະດົມກຳລັງແຮງສັງລວມຂອງຊາດ, ຍົກສູງຄວາມຮັບຜິດຊອບຂອງອົງການຈັດຕັ້ງທຸກພາກສ່ວນ ແລະ ພົນລະເມືອງລາວທຸກຄົນ ປະກອບສ່ວນເຂົ້າໃນວຽກງານການປ້ອງກັນຊາດ.

**ມາດຕາ 2 ກຳລັງສຳຮອງປ້ອງກັນຊາດ**

ກຳລັງສຳຮອງປ້ອງກັນຊາດ ແມ່ນກຳລັງບໍ່ປະຈຳການໃນກອງທັບປະຊາຊົນລາວ ໃນຍາມສັນຕິພາບ ແຕ່ຢູ່ໃນແຜນການຈັດຕັ້ງປະກອບຂອງກອງທັບປະຊາຊົນລາວ ໃນພາວະສົງຄາມ ຫຼື ສຸກເສີນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ພາວະສົງຄາມ ໝາຍເຖິງ ສະພາບທີ່ມີການປະທະກັນດ້ວຍກຳລັງປະກອບອາວຸດ, ມີການນາບຂູ່, ບຽດບົດ, ບຸກຕີ ແລະ ຮຸກຮານ ຈາກສັດຕູພາຍນອກ ເຮັດໃຫ້ສັງຄົມ ການເມືອງພາຍໃນປະເທດ ມີຄວາມວຸ້ນວາຍ ກໍ່ໃຫ້ເກີດມີຄວາມເສຍຫາຍຕໍ່ຊີວິດ, ຊັບສິນຂອງພົນລະເມືອງ, ມີຄວາມເປັນອັນຕະລາຍຮ້າຍແຮງຕໍ່ຄວາມໝັ້ນຄົງຂອງຊາດ;

2. ພາວະສຸກເສີນ ໝາຍເຖິງ ສະພາບທາງດ້ານສັງຄົມ, ການເມືອງຂອງປະເທດ ເກີດມີຄວາມວຸ້ນວາຍ, ມີການກໍ່ການຈາລະຈົນ ຊຶ່ງມີຄວາມສ່ຽງໂດຍກົງຕໍ່ຄວາມໝັ້ນຄົງຂອງຊາດ ຫຼື ມີການເຄື່ອນໄຫວທາງດ້ານການທະຫານຂອງກຸ່ມຄົນບໍ່ດີ ແຕ່ຍັງບໍ່ທັນເຖິງລະດັບສົງຄາມ;

3. ຄວາມຕ້ອງການທີ່ຈຳເປັນ ໝາຍເຖິງ ເວລາທີ່ກຳລັງປະຈຳການໃນກອງທັບ ບໍ່ພຽງພໍກັບຄວາມຕ້ອງການສູ້ຮົບໃນພາວະສົງຄາມ ຫຼື ສຸກເສີນ ຈຳເປັນຕ້ອງລະດົມກຳລັງສຳຮອງເພີ່ມຕື່ມ;

4. ການປຸກລະດົມຄັ້ງໃຫຍ່ ໝາຍເຖິງ ການປຸກລະດົມແຕ່ສອງສ່ວນສາມ ຫຼື ທັງໝົດ ກຳລັງສຳຮອງ;

5. ການປຸກລະດົມບາງພາກສ່ວນ ໝາຍເຖິງ ການປຸກລະດົມບາງພາກສ່ວນຂອງກຳລັງສຳຮອງ ເພື່ອປະກອບໃຫ້ບາງກົມກອງເຫຼົ່າຮົບ ທີ່ຂາດກຳລັງສູ້ຮົບ;

6. ການປຸກລະດົມບາງບໍລິເວນ ໝາຍເຖິງ ການປຸກລະດົມກຳລັງສຳຮອງ ສອງແຂວງຂຶ້ນໄປ ແຕ່ບໍ່ເກີນເຄິ່ງໜຶ່ງຂອງກຳລັງສຳຮອງທັງໝົດ;

7. ຄຳສັ່ງຮຽກເອີ້ນ ໝາຍເຖິງ ຄຳສັ່ງຮຽກເອີ້ນກຳລັງພົນສຳຮອງ ເຂົ້າຮ່ວມການປະກາດສ້າງຕັ້ງ, ອົບຮົມ-ຫັດແອບ, ກວດກາຄວາມພ້ອມ ແລະ ເຂົ້າປະຈຳການໃນກອງທັບ;

8. ຄຳສັ່ງປຸກລະດົມ ໝາຍເຖິງ ຄຳສັ່ງປຸກລະດົມກຳລັງພົນ ແລະ ພາຫະນະເຕັກນິກສຳຮອງ ເຂົ້າປະຈຳການໃນກອງທັບ ໃນພາວະສົງຄາມ ຫຼື ສຸກເສີນ;

9. ການບັນຊາລະບົບສອງຫົວໜ້າ ໝາຍເຖິງ ລະບົບການບັນຊາທີ່ມີຫົວໜ້າການທະຫານ ແລະ ຫົວໜ້າການເມືອງ ຊຶ່ງມີສິດການບັນຊາເທົ່າທຽມກັນ. ຫົວໜ້າການທະຫານ ຊີ້ນຳກ່ຽວກັບວຽກງານການທະຫານ, ຫົວໜ້າການເມືອງ ຊີ້ນຳກ່ຽວກັບວຽກງານການເມືອງແນວຄິດ.

**ມາດຕາ 4 ນະໂຍບາຍຂອງລັດຕໍ່ວຽກງານກຳລັງສຳຮອງປ້ອງກັນຊາດ**

ລັດ ສົ່ງເສີມວຽກງານກຳລັງສຳຮອງ ດ້ວຍການສຶກສາອົບຮົມ, ປະກອບບຸກຄະລາກອນ, ສະໜອງງົບປະມານ ແລະ ອຸປະກອນ ໃຫ້ອົງການຈັດຕັ້ງປະຕິບັດວຽກງານກຳລັງສຳຮອງ ເພື່ອສ້າງເງື່ອນໄຂໃຫ້ອົງການຈັດຕັ້ງດັ່ງກ່າວ ໄດ້ເຄື່ອນໄຫວວຽກງານ ຢ່າງມີປະສິດທິຜົນ.

ລັດ ຊຸກຍູ້ໃຫ້ທຸກພາກສ່ວນໃນທົ່ວສັງຄົມ ເຂົ້າຮ່ວມ ແລະ ປະກອບສ່ວນທາງດ້ານກຳລັງພົນ, ພາຫະນະເຕັກນິກ ແລະ ວັດຖຸປັດໄຈ ເຂົ້າໃນວຽກງານກຳລັງສຳຮອງ.

**ມາດຕາ 5 ຫຼັກການພື້ນຖານກ່ຽວກັບວຽກງານກຳລັງສຳຮອງປ້ອງກັນຊາດ**

ວຽກງານກຳລັງສຳຮອງ ເຄື່ອນໄຫວຕາມຫຼັກການພື້ນຖານ ດັ່ງນີ້:

1. ຮັບປະກັນຄວາມເປັນເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງ ສປປ ລາວ;
2. ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ, ແຜນຍຸດທະສາດການປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ແລະ ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ;
3. ລວມສູນເປັນເອກະພາບ ໃນຂອບເຂດທົ່ວປະເທດ ບົນພື້ນຖານການແບ່ງຂັ້ນຄຸ້ມຄອງລະຫວ່າງສູນກາງ ແລະ ທ້ອງຖິ່ນ ຢ່າງຈະແຈ້ງ;
4. ປຸກລະດົມກຳລັງແຮງສັງລວມຂອງທົ່ວປວງຊົນລາວທັງຊາດ;
5. ຮັບປະກັນຄວາມລັບທາງດ້ານການທະຫານຂອງຊາດ.

**ມາດຕາ 6 ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ ນຳໃຊ້ສຳລັບພົນລະເມືອງລາວທຸກຄົນ ແລະ ທຸກອົງການຈັດຕັ້ງ ພາຍໃນປະເທດ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມື ກັບສາກົນໃນວຽກງານກຳລັງສຳຮອງ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຊີ, ການປະສານງານ ແລະ ການພັດທະນາຊັບພະຍາກອນມະນຸດ ບົນພື້ນຖານຫຼັກການຢູ່ຮ່ວມກັນໂດຍສັນຕິ, ເຄົາລົບເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ, ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ ແລະ ກັນ, ສະເໝີພາບ ແລະ ຕ່າງຝ່າຍ ຕ່າງໄດ້ຮັບຜົນປະໂຫຍດ.

ລັດ ສົ່ງເສີມການພົວພັນຮ່ວມມື ກັບບັນດາປະເທດເພື່ອນມິດຍຸດທະສາດ ກ່ຽວກັບວຽກງານກຳລັງສຳຮອງ.

## ໝວດທີ 2
## ທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ສິດ ແລະ ພັນທະຂອງກໍາລັງສໍາຮອງປ້ອງກັນຊາດ

### ມາດຕາ 8 ທີ່ຕັ້ງ ແລະ ພາລະບົດບາດ

ກໍາລັງສໍາຮອງ ສ້າງຕັ້ງຂຶ້ນຢູ່ບັນດາແຂວງ, ນະຄອນຫຼວງ, ເມືອງ-ນະຄອນ, ບັນດາກະຊວງ ແລະ ອົງການລັດທຽບເທົ່າກະຊວງ ໂດຍມີສາຍຕັ້ງຂຶ້ນກັບກະຊວງປ້ອງກັນປະເທດ;

ກໍາລັງສໍາຮອງ ມີພາລະບົດບາດເປັນກໍາລັງໜູນໃຫ້ແກ່ກໍາລັງປະຈໍາການໃນກອງທັບ ໃນພາວະສົງຄາມ ຫຼື ສຸກເສີນ.

### ມາດຕາ 9 ໜ້າທີ່

ກໍາລັງສໍາຮອງ ມີໜ້າທີ່ ດັ່ງນີ້:

1. ປະຕິບັດຄໍາສັ່ງຮຽກເອີ້ນ, ເຕົ້າໂຮມຫັດແອບ ແລະ ກວດກາຄວາມພ້ອມກໍາລັງສໍາຮອງ;
2. ປະຕິບັດຄໍາສັ່ງປຸກລະດົມເຂົ້າປະຈໍາການໃນກອງທັບ;
3. ເຄົາລົບ, ປະຕິບັດລັດຖະທໍາມະນູນ, ກົດໝາຍຂອງລັດ, ກົດລະບຽບຂອງກອງທັບ ແລະ ຄໍາສັ່ງຂອງຜູ້ບັນຊາ ຢ່າງເຂັ້ມງວດ;
4. ເຂົ້າຮ່ວມວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ແລະ ການພັດທະນາເສດຖະກິດ - ສັງຄົມ;
5. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 10 ສິດ ແລະ ພັນທະ

ກໍາລັງສໍາຮອງ ມີສິດ ແລະ ພັນທະ ດັ່ງນີ້:

1. ໃນເວລາສັນຕິພາບ ມີສິດ ແລະ ພັນທະຄືກັນກັບພົນລະເມືອງລາວທຸກຄົນ;
2. ໃນເວລາຖືກລະດົມເຂົ້າປະຈໍາການໃນກອງທັບ ມີສິດ ແລະ ພັນທະຄືກັນກັບກໍາລັງປະຈໍາການໃນກອງທັບ;
3. ປະຕິບັດສິດ ແລະ ພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 3
## ປະເພດຂອງກໍາລັງສໍາຮອງປ້ອງກັນຊາດ

### ມາດຕາ 11 ປະເພດກໍາລັງສໍາຮອງປ້ອງກັນຊາດ

ກໍາລັງສໍາຮອງປ້ອງກັນຊາດ ປະກອບມີສອງປະເພດ ດັ່ງນີ້:

1. ກໍາລັງພົນສໍາຮອງ;
2. ພາຫະນະເຕັກນິກສໍາຮອງ.

**ມາດຕາ 12 ກຳລັງພົນສຳຮອງປ້ອງກັນຊາດ**

ກຳລັງພົນສຳຮອງ ປະກອບມີສອງປະເພດ ດັ່ງນີ້:

1. ກຳລັງພົນສຳຮອງປະເພດໜຶ່ງ: ແມ່ນຜູ້ທີ່ໄດ້ຜ່ານການເປັນທະຫານ ໃນກອງທັບປະຊາຊົນລາວມາກ່ອນ ມີອາຍຸບໍ່ເກີນ ສີ່ສິບຫ້າ ປີ, ມີສຸຂະພາບແຂງແຮງ ສາມາດຮັບໃຊ້ໃນຖັນແຖວກອງທັບ ເມື່ອມີຄວາມຕ້ອງການທີ່ຈຳເປັນ.

2. ກຳລັງພົນສຳຮອງປະເພດສອງ: ແມ່ນຜູ້ທີ່ບໍ່ທັນໄດ້ຜ່ານການເປັນທະຫານມາກ່ອນ ຊຶ່ງມີເງື່ອນໄຂ ແລະ ມາດຕະຖານ ດັ່ງລຸ່ມນີ້:

- ເປັນພົນລະເມືອງລາວໂດຍກຳເນີດທີ່ມີອາຍຸ ສິບແປດ - ສີ່ສິບຫ້າ ປີ;
- ມີນ້ຳໃຈຮັກຊາດ;
- ມີສຸຂະພາບສົມບູນ ແລະ ແຂງແຮງດີ.

**ມາດຕາ 13 ພາຫະນະເຕັກນິກສຳຮອງປ້ອງກັນຊາດ**

ພາຫະນະເຕັກນິກສຳຮອງ ປະກອບມີ: ພາຫະນະຂົນສົ່ງ, ລະບົບສື່ສານ, ຄົມມະນາຄົມ, ສາທາລະນະສຸກ, ພື້ນຖານການຜະລິດ ແລະ ວັດຖຸເຕັກນິກ ທີ່ເປັນຂອງລັດ, ບຸກຄົນ ແລະ ນິຕິບຸກຄົນ ທີ່ນອນໃນແຜນການນຳໃຊ້ຂອງກອງທັບ ໃນພາວະສົງຄາມ ຫຼື ສຸກເສີນ.

**ມາດຕາ 14 ການສິ້ນສຸດການເປັນກຳລັງພົນສຳຮອງປ້ອງກັນຊາດ**

ການເປັນກຳລັງພົນສຳຮອງ ຈະສິ້ນສຸດລົງ ເມື່ອບຸກຄົນນັ້ນຫາກມີອາຍຸເກີນ ສີ່ສິບຫ້າ ປີ ສຳລັບເພດຊາຍ, ສີ່ສິບ ປີ ສຳລັບເພດຍິງ ຫຼື ມີສຸຂະພາບອ່ອນເພຍ, ເສຍອົງຄະ ຫຼື ເສຍຊີວິດ.

## ໝວດ 4
## ການບັນຊາກຳລັງສຳຮອງ

**ມາດຕາ 14 ການບັນຊາກຳລັງສຳຮອງປ້ອງກັນຊາດ**

ການບັນຊາກຳລັງສຳຮອງ ມີດັ່ງນີ້:

1. ກະຊວງປ້ອງກັນປະເທດ ເປັນອົງການຊີ້ນຳ - ບັນຊາໂດຍກົງຮອບດ້ານ ວຽກງານກຳລັງສຳຮອງ ໃນທົ່ວປະເທດ;

2. ກອງບັນຊາການທະຫານແຂວງ - ນະຄອນຫຼວງ ເປັນອົງການຊີ້ນຳ - ບັນຊາ ວຽກງານການກໍ່ສ້າງ ແລະ ປະຕິບັດຄຳສັ່ງປຸກລະດົມກຳລັງສຳຮອງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ກອງບັນຊາການທະຫານເມືອງ - ນະຄອນ ປະຕິບັດວຽກງານສ້າງຕັ້ງ, ອົບຮົມ-ຫັດແອບ ແລະ ບັນຊາກຳລັງສຳຮອງ ຕາມການຊີ້ນຳຂອງກອງບັນຊາການທະຫານແຂວງ - ນະຄອນຫຼວງ;

4. ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ເປັນຜູ້ຊີ້ນຳ ແລະ ຈັດຕັ້ງບັນຊາກຳລັງສຳຮອງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 15 ການແຕ່ງຕັ້ງ ຫຼື ປົດຕຳແໜ່ງຜູ້ບັນຊາກຳລັງສຳຮອງປ້ອງກັນຊາດ**

ການແຕ່ງຕັ້ງຜູ້ບັນຊາກຳລັງສຳຮອງ ມີດັ່ງນີ້:

1. ກະຊວງປ້ອງກັນປະເທດ ແຕ່ງຕັ້ງ ຫຼື ປົດຕຳແໜ່ງຜູ້ບັນຊາກຳລັງສຳຮອງ ຂັ້ນກອງພັນໃຫຍ່ ຕາມການສະເໜີຂອງກົມໃຫຍ່ເສນາທິການກອງທັບ;

2. ກົມໃຫ່ຍເສນາທິການກອງທັບ ແຕ່ງຕັ້ງ ຫຼື ປົດຕຳແໜ່ງຜູ້ບັນຊາກຳລັງສຳຮອງ ຂັ້ນກອງພັນນ້ອຍ ຕາມການສະເໜີຂອງກອງບັນຊາການທະຫານແຂວງ - ນະຄອນຫຼວງ;

3. ກອງບັນຊາການທະຫານແຂວງ - ນະຄອນຫຼວງ ແຕ່ງຕັ້ງ ຫຼື ປົດຕຳແໜ່ງຜູ້ບັນຊາກຳລັງສຳຮອງ ຂັ້ນກອງຮ້ອຍ ຕາມການສະເໜີຂອງກອງບັນຊາການທະຫານເມືອງ - ນະຄອນ;

4. ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແຕ່ງຕັ້ງ ຫຼື ປົດຕຳແໜ່ງຜູ້ບັນຊາກຳລັງສຳຮອງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

ການແຕ່ງຕັ້ງຜູ້ບັນຊາກຳລັງສຳຮອງ ແມ່ນປະຕິບັດລະບົບການບັນຊາສອງຫົວໜ້າ.

**ມາດຕາ 16 ສິດ ແລະ ໜ້າທີ່ຜູ້ບັນຊາກຳລັງສຳຮອງປ້ອງກັນຊາດ**

ຜູ້ບັນຊາກຳລັງສຳຮອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກຳແໜ້ນສະພາບຈຳນວນພົນ, ຄຸນນະພາບ ແລະ ຄວາມສາມາດ ຂອງກຳລັງສຳຮອງທີ່ ຢູ່ໃນຄວາມຮັບຜິດຊອບຂອງຕົນ;

2. ຄຸ້ມຄອງ, ບັນຊາກົມກອງໃນເວລາເຕົ້າໂຮມຫັດແອບ ແລະ ກວດກາຄວາມພ້ອມໃນການປະຕິບັດຄຳສັ່ງປຸກລະດົມເຂົ້າປະຈຳການໃນກອງທັບ;

3. ປະຕິບັດວຽກງານການດຳເນີນຊີວິດການເມືອງ ແລະ ລະບອບການສ່ອງແສງລາຍງານສະພາບກົມກອງໃຫ້ຂັ້ນເທິງຖັດຕົນ ຢ່າງເປັນປົກກະຕິ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 5
## ການກໍ່ສ້າງກຳລັງສຳຮອງປ້ອງກັນຊາດ

**ມາດຕາ 18 ການກໍ່ສ້າງກຳລັງສຳຮອງປ້ອງກັນຊາດ**

ການກໍ່ສ້າງກຳລັງສຳຮອງ ປະກອບມີ:

1. ການຂຶ້ນທະບຽນກຳລັງພົນ ແລະ ພາຫະນະເຕັກນິກສຳຮອງ;
2. ການກຳນົດໂຄງປະກອບການຈັດຕັ້ງກຳລັງສຳຮອງ;
3. ການປະກາດສ້າງຕັ້ງກອງກຳລັງສຳຮອງ;
4. ການຄຸ້ມຄອງກຳລັງສຳຮອງ;

5. ການຈັດຕັ້ງອົບຮົມ-ຫັດແອບ, ກວດກາຄວາມພ້ອມກໍາລັງສໍາຮອງ;

6. ການຮັບປະກັນດ້ານພະລາທິການ - ເຕັກນິກ.

**ມາດຕາ 19 ການຂຶ້ນທະບຽນກໍາລັງພົນສໍາຮອງປ້ອງກັນຊາດ**

ການຂຶ້ນທະບຽນກໍາລັງພົນສໍາຮອງ ມີດັ່ງນີ້:

1. ກອງບັນຊາການທະຫານເມືອງ, ນະຄອນ ເປັນຜູ້ກວດກາ, ເກັບກໍາ ແລະ ຂຶ້ນບັນຊີລາຍຊື່ຈໍານວນນາຍ ແລະ ພົນທະຫານ ທີ່ຈົບພັນທະ ຫຼື ອອກຮັບອຸດໜູນກັບຄືນທ້ອງຖິ່ນ ເພື່ອຄັດເລືອກເປັນກໍາລັງພົນສໍາຮອງປະເພດໜຶ່ງ;

2. ບັນດາແຂວງ, ນະຄອນຫຼວງ, ເມືອງ, ນະຄອນ, ບ້ານ, ກະຊວງ ແລະ ອົງການລັດທຽບເທົ່າກະຊວງ ເປັນຜູ້ກວດກາ, ເກັບກໍາ ແລະ ຂຶ້ນບັນຊີລາຍຊື່ພົນລະເມືອງ ທີ່ບໍ່ທັນໄດ້ຜ່ານການເປັນທະຫານຢູ່ຂັ້ນຂອງຕົນ ເພື່ອຈັດເຂົ້າສະຖິຕິການເປັນກໍາລັງພົນສໍາຮອງປະເພດສອງ;

**ມາດຕາ 20 ການຂຶ້ນທະບຽນພາຫະນະເຕັກນິກສໍາຮອງປ້ອງກັນຊາດ**

ການຂຶ້ນທະບຽນພາຫະນະເຕັກນິກສໍາຮອງ ແມ່ນການຂຶ້ນທະບຽນພາຫະນະຂົນສົ່ງ, ລະບົບສື່ສານ, ຄົມມະນາຄົມ, ສາທາລະນະສຸກ, ພື້ນຖານການຜະລິດ, ວັດຖຸເຕັກນິກຂອງລັດ, ບຸກຄົນ ແລະ ນິຕິບຸກຄົນ ເຂົ້າໃນແຜນການຮັບໃຊ້ວຽກງານການທະຫານ ໃນພາວະສົງຄາມ ຫຼື ສຸກເສີນ.

ບັນດາແຂວງ, ເມືອງ, ບ້ານ, ບັນດາກະຊວງ ແລະ ອົງການລັດທຽບເທົ່າກະຊວງ ຕ້ອງເກັບກໍາບັນຊີພາຫະນະ, ວັດຖຸເຕັກນິກທັງໝົດຢູ່ຂັ້ນຂອງຕົນ ເພື່ອຂຶ້ນທະບຽນເປັນພາຫະນະເຕັກນິກສໍາຮອງ ຮັບໃຊ້ໃຫ້ແກ່ວຽກງານການທະຫານ ໃນພາວະສົງຄາມ ຫຼື ສຸກເສີນ.

**ມາດຕາ 21 ການກໍານົດໂຄງປະກອບການຈັດຕັ້ງກອງກໍາລັງສໍາຮອງປ້ອງກັນຊາດ**

ໂຄງປະກອບການຈັດຕັ້ງກອງກໍາລັງສໍາຮອງ ແມ່ນກໍານົດເປັນຂັ້ນໝູ່, ໝວດ, ກອງຮ້ອຍ, ກອງພັນນ້ອຍ ຫຼື ກອງພັນໃຫຍ່.

ການກໍານົດໂຄງປະກອບການຈັດຕັ້ງກອງກໍາລັງສໍາຮອງ ແມ່ນອີງໃສ່ຂໍ້ມູນທາງດ້ານຈໍານວນພົນກໍາລັງສໍາຮອງຕົວຈິງ ທີ່ມີຢູ່ໃນທ້ອງຖິ່ນ, ບັນດາກະຊວງ ແລະ ອົງການລັດທຽບເທົ່າກະຊວງ.

**ມາດຕາ 22 ການສ້າງຕັ້ງກໍາລັງສໍາຮອງປ້ອງກັນຊາດ**

ການສ້າງຕັ້ງກໍາລັງສໍາຮອງ ມີເງື່ອນໄຂດັ່ງນີ້:

1. ມີການອະນຸມັດສ້າງຕັ້ງຈາກກະຊວງປ້ອງກັນປະເທດ;

2. ອົງການປົກຄອງທ້ອງຖິ່ນ, ກະຊວງ ແລະ ອົງການລັດທຽບເທົ່າກະຊວງ ມີຄວາມພ້ອມໃນການປະກາດສ້າງຕັ້ງ.

**ມາດຕາ 23 ການຄຸ້ມຄອງກຳລັງສຳຮອງປ້ອງກັນຊາດ**

ການຄຸ້ມຄອງກຳລັງສຳຮອງ ມີດັ່ງນີ້:

1. ຄຸ້ມຄອງທາງດ້ານບັນຊີຈຳນວນພົນ ແລະ ພາຫະນະເຕັກນິກສຳຮອງ;

2. ຄຸ້ມຄອງທາງດ້ານຄຸນນະພາບ ຂອງກຳລັງພົນ ແລະ ພາຫະນະເຕັກນິກສຳຮອງ.

**ມາດຕາ 24 ການຈັດຕັ້ງອົບຮົມ-ຫັດແອບກຳລັງສຳຮອງປ້ອງກັນຊາດ**

ການຈັດຕັ້ງອົບຮົມ-ຫັດແອບກຳລັງສຳຮອງ ມີດັ່ງນີ້:

1. ກະຊວງປ້ອງກັນປະເທດ ເປັນຜູ້ກຳນົດຫຼັກສູດ ແລະ ອະນຸມັດແຜນການອົບຮົມ-ຫັດແອບກຳລັງສຳຮອງ ໃນຂອບເຂດທົ່ວປະເທດ;

2. ກອງບັນຊາການທະຫານແຂວງ - ນະຄອນຫຼວງ, ບັນດາກະຊວງ ແລະ ອົງການລັດທຽບເທົ່າກະຊວງ ເປັນຜູ້ສ້າງແຜນການອົບຮົມ-ຫັດແອບກຳລັງສຳຮອງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຕາມການຊີ້ນຳຂອງກະຊວງປ້ອງກັນປະເທດ;

3. ກອງບັນຊາການທະຫານເມືອງ - ນະຄອນ ເປັນຜູ້ຈັດຕັ້ງປະຕິບັດແຜນການອົບຮົມ-ຫັດແອບກຳລັງສຳຮອງ ປະຈຳປີ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຕາມການມອບໝາຍຂອງກອງບັນຊາການທະຫານແຂວງ - ນະຄອນຫຼວງ.

ການອົບຮົມ-ຫັດແອບກຳລັງສຳຮອງຂອງເຫຼົ່າຮົບວິຊາສະເພາະ ທີ່ບໍ່ມີຢູ່ຂັ້ນທ້ອງຖິ່ນຂອງຕົນ ແມ່ນໃຫ້ດຳເນີນຢູ່ກົມກອງເຫຼົ່າຮົບກຳລັງຫຼວງ ທີ່ຢູ່ໃກ້ຄຽງ.

ການອົບຮົມ-ຫັດແອບກຳລັງສຳຮອງປະເພດໜຶ່ງ ແມ່ນດຳເນີນປີລະໜຶ່ງຄັ້ງ, ແຕ່ລະຄັ້ງກຳນົດເວລາບໍ່ເກີນ 15 ວັນ.

ການອົບຮົມ-ຫັດແອບຂອງກຳລັງສຳຮອງປະເພດສອງ ແມ່ນນອນໃນແຜນການສຶກສາປ້ອງກັນຊາດ.

**ມາດຕາ 25 ການກວດກາຄວາມພ້ອມກຳລັງສຳຮອງປ້ອງກັນຊາດ**

ການກວດກາຄວາມພ້ອມກຳລັງສຳຮອງ ມີດັ່ງນີ້:

1. ກວດກາຄວາມພ້ອມທາງດ້ານຈຳນວນ ແລະ ຄຸນນະພາບຂອງກຳລັງພົນສຳຮອງ;

2. ກວດກາຄວາມພ້ອມທາງດ້ານຄວາມສາມາດ ໃນການເຄື່ອນຍ້າຍ ແລະ ການມອບ - ຮັບ ພາຫະນະເຕັກນິກສຳຮອງ;

3. ກວດກາຄວາມສາມາດການຊີ້ນຳ - ບັນຊາຂອງຜູ້ບັນຊາກຳລັງສຳຮອງ;

4. ກວດກາຄວາມພ້ອມດ້ານວຽກງານຮັບປະກັນ ພະລາທິການ;

ກະຊວງປ້ອງກັນປະເທດ ເປັນຜູ້ຊີ້ນຳການກວດກາຄວາມພ້ອມ ຂອງກຳລັງສຳຮອງໃນທົ່ວປະເທດ;

ບັນດາແຂວງ - ນະຄອນຫຼວງ, ເມືອງ - ນະຄອນ, ບັນດາກະຊວງ ແລະ ອົງການລັດທຽບເທົ່າກະຊວງ ເປັນຜູ້ກວດກາຄວາມພ້ອມກຳລັງສຳຮອງຢູ່ຂັ້ນຂອງຕົນ.

**ມາດຕາ 26 ການຮັບປະກັນດ້ານພະລາທິການ - ເຕັກນິກ**

ການຮັບປະກັນດ້ານພະລາທິການ - ເຕັກນິກ ແມ່ນການຮັບປະກັນທາງດ້ານການເງິນ, ເຄື່ອງອຸປະໂພກ - ບໍລິໂພກ, ການຮັກສາສຸຂະພາບ ແລະ ພາຫະນະເຕັກນິກ ເພື່ອຮັບໃຊ້ໃຫ້ແກ່ການສ້າງຕັ້ງ, ອົບຮົມ-ຫັດແອບ ແລະ ກວດກາຄວາມພ້ອມກໍາລັງສໍາຮອງ.

## ໝວດທີ 6
## ການປຸກລະດົມ ແລະ ນໍາໃຊ້ກໍາລັງສໍາຮອງປ້ອງກັນຊາດ

**ມາດຕາ 27 ການປຸກລະດົມກໍາລັງສໍາຮອງປ້ອງກັນຊາດ**

ການປຸກລະດົມກໍາລັງສໍາຮອງ ແມ່ນການອອກຄໍາສັ່ງປຸກລະດົມກໍາລັງສໍາຮອງ ເຂົ້າປະຈໍາການໃນກອງທັບ ໃນພາວະສົງຄາມ ຫຼື ສຸກເສີນ, ໂດຍຈະລະດົມເປັນຄັ້ງໃຫຍ່ ຫຼື ລະດົມບາງພາກສ່ວນ, ບາງບໍລິເວນ.

**ມາດຕາ 28 ເງື່ອນໄຂການປຸກລະດົມກໍາລັງສໍາຮອງປ້ອງກັນຊາດ**

ກໍາລັງສໍາຮອງ ຖືກປຸກລະດົມໃນເວລາປະເທດຊາດ ເກີດມີພາວະສົງຄາມ ຫຼື ສຸກເສີນ ຊຶ່ງກໍາລັງປະຈໍາການຂອງກອງທັບ ບໍ່ພຽງພໍກັບຄວາມຕ້ອງການສູ້ຮົບ.

**ມາດຕາ 29 ການອອກ ຫຼື ຍົກເລີກຄໍາສັ່ງປຸກລະດົມກໍາລັງສໍາຮອງປ້ອງກັນຊາດຄັ້ງໃຫຍ່**

ນາຍົກລັດຖະມົນຕີ ເປັນຜູ້ອອກຄໍາສັ່ງລະດົມກໍາລັງສໍາຮອງຄັ້ງໃຫຍ່ ໃນທົ່ວປະເທດ ພາຍຫຼັງປະທານປະເທດ ປະກາດພາວະສົງຄາມ ຫຼື ສຸກເສີນ, ຫັນທຸກການເຄື່ອນໄຫວທາງດ້ານເສດຖະກິດ, ວັດທະນະທໍາ, ສັງຄົມ ເພື່ອຮັບໃຊ້ການສູ້ຮົບໃນພາວະສົງຄາມ ຫຼື ສຸກເສີນ.

ລັດຖະມົນຕີກະຊວງປ້ອງກັນປະເທດ ເປັນຜູ້ຕົກລົງເພີ່ມກໍາລັງພົນ ແລະ ພາຫະນະເຕັກນິກສໍາຮອງ ໃຫ້ກໍາລັງສູ້ຮົບ.

ນາຍົກລັດຖະມົນຕີ ເປັນຜູ້ປະກາດຍົກເລີກ ຄໍາສັ່ງລະດົມກໍາລັງສໍາຮອງຄັ້ງໃຫຍ່ ເມື່ອພາວະສົງຄາມ ຫຼື ສຸກເສີນ ໄດ້ສິ້ນສຸດລົງ ຕາມການສະເໜີຂອງລັດຖະມົນຕີກະຊວງປ້ອງກັນປະເທດ.

**ມາດຕາ 30 ການອອກ ຫຼື ຍົກເລີກຄໍາສັ່ງປຸກລະດົມກໍາລັງສໍາຮອງປ້ອງກັນຊາດບາງພາກສ່ວນ ຫຼື ບໍລິເວນ**

ລັດຖະມົນຕີກະຊວງປ້ອງກັນປະເທດ ອອກຄໍາສັ່ງລະດົມກໍາລັງສໍາຮອງບາງພາກສ່ວນ ຫຼື ບໍລິເວນ ຕາມການຕົກລົງຂອງນາຍົກລັດຖະມົນຕີ ເພື່ອປະກອບເພີ່ມເຕີມໃຫ້ກົມກອງ ແລະ ທ້ອງຖິ່ນ ທີ່ເກີດມີພາວະສົງຄາມ ຫຼື ສຸກເສີນ ຫຼື ເພື່ອປະກອບໃຫ້ກົມກອງ ແລະ ທ້ອງຖິ່ນໃກ້ຄຽງ.

ລັດຖະມົນຕີກະຊວງປ້ອງກັນປະເທດ ປະກາດຍົກເລີກຄໍາສັ່ງລະດົມກໍາລັງສໍາຮອງບາງພາກສ່ວນ ຫຼື ບໍລິເວນ ເມື່ອສະພາບເຂົ້າສູ່ພາວະປົກກະຕິ ຫຼື ສົງຄາມສິ້ນສຸດລົງ.

**ມາດຕາ 31 ການຈັດຕັ້ງປະຕິບັດການປຸກລະດົມກຳລັງສຳຮອງປ້ອງກັນຊາດ**

ການຈັດຕັ້ງປະຕິບັດການປຸກລະດົມກຳລັງສຳຮອງ ມີດັ່ງນີ້:

1. ນາຍົກລັດຖະມົນຕີ ອະນຸມັດຕົວເລກປຸກລະດົມກຳລັງສຳຮອງ ຕາມການສະເໜີຂອງກະຊວງປ້ອງກັນປະເທດ;

2. ລັດຖະມົນຕີກະຊວງປ້ອງກັນປະເທດ ເປັນຜູ້ຊີ້ນຳ - ບັນຊາໂດຍກົງ ການປຸກລະດົມ ແລະ ນຳໃຊ້ກຳລັງສຳຮອງ ໃຫ້ອົງການປົກຄອງທ້ອງຖິ່ນ, ກະຊວງ ແລະ ອົງການລັດທຽບເທົ່າກະຊວງ ຈັດຕັ້ງປະຕິບັດ;

3. ປະທານຄະນະກຳມະການປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ຂັ້ນແຂວງ ແຕ່ງຕັ້ງຄະນະກຳມະການຂັ້ນຂອງຕົນ ເພື່ອຊີ້ນຳ - ນຳພາ ການສ້າງແຜນການປຸກລະດົມກຳລັງສຳຮອງ ໃຫ້ແກ່ກຳລັງປະຈຳການສູ້ຮົບໃນກອງທັບ;

4. ບັນດາເຈົ້າເມືອງ - ນະຄອນ ແຕ່ງຕັ້ງຄະນະກຳມະການຂັ້ນຂອງຕົນ ເພື່ອສ້າງແຜນການ, ຈັດຕັ້ງປະຕິບັດການປຸກລະດົມກຳລັງສຳຮອງ ໃຫ້ກຳລັງປະຈຳການສູ້ຮົບໃນກອງທັບ;

5. ບັນດາລັດຖະມົນຕີກະຊວງ ແລະ ອົງການລັດທຽບເທົ່າກະຊວງ ແຕ່ງຕັ້ງຄະນະກຳມະການຂັ້ນຂອງຕົນ ເພື່ອຊີ້ນຳ - ນຳພາການສ້າງແຜນການປຸກລະດົມກຳລັງສຳຮອງ ຕາມການຕົກລົງຂອງລັດຖະບານ ແລະ ການສະເໜີຂອງກະຊວງປ້ອງກັນປະເທດ.

ບັນດາກົມກອງກຳລັງຫຼວງ, ກຳລັງທ້ອງຖິ່ນ ສ້າງແຜນການຕ້ອນຮັບ, ສັບຊ້ອນ ແລະ ຈັດຕັ້ງອົບຮົມ-ຫັດແອບ ກຳລັງສຳຮອງທີ່ໄດ້ມອບ - ຮັບ.

**ມາດຕາ 32 ການເຕົ້າໂຮມ, ເຄື່ອນຍ້າຍ ແລະ ມອບຮັບກຳລັງສຳຮອງປ້ອງກັນຊາດ**

1. ປະທານຄະນະກຳມະການປ້ອງກັນຊາດ - ປ້ອງກັນຄວາມສະຫງົບຂັ້ນແຂວງ, ລັດຖະມົນຕີບັນດາກະຊວງ ແລະ ອົງການລັດທຽບເທົ່າກະຊວງ ຊີ້ນຳການຈັດຕັ້ງປະຕິບັດການເຕົ້າໂຮມ, ເຄື່ອນຍ້າຍ ແລະ ມອບ - ຮັບ ກຳລັງສຳຮອງປ້ອງກັນຊາດໃຫ້ກົມກອງກຳລັງປະຈຳການໃນກອງທັບ;

2. ຄະນະກຳມະການປຸກລະດົມກຳລັງສຳຮອງແຕ່ລະຂັ້ນ ຕ້ອງປະຕິບັດວຽກງານການເຕົ້າໂຮມ, ເຄື່ອນຍ້າຍ ກຳລັງພົນ ແລະ ພາຫະນະເຕັກນິກສຳຮອງ ພ້ອມທັງຈັດສົ່ງ - ມອບຮັບໃຫ້ກົມກອງທີ່ປະຈຳການໃນກອງທັບ ຕາມແຜນການ;

3. ກຳລັງພົນສຳຮອງທຸກຄົນຕ້ອງປະຕິບັດຄຳສັ່ງປຸກລະດົມເຂົ້າປະຈຳການ;

4. ບັນດາກົມກອງກຳລັງປະຈຳການໃນກອງທັບ ພາຍຫຼັງໄດ້ຮັບກຳລັງສຳຮອງ ຕ້ອງຈັດຕັ້ງປະກອບ - ຊັບຊ້ອນໃສ່ການຈັດຕັ້ງຂັ້ນຂອງຕົນ;

5. ພາຫະນະເຕັກນິກສຳຮອງ ທີ່ຖືກລະດົມຕ້ອງເຄື່ອນຍ້າຍຕາມຄຳສັ່ງ;

6. ສະຖານທີ່, ເວລາການມອບ - ຮັບກຳລັງສຳຮອງ ຕ້ອງປະຕິບັດຕາມແຜນການ, ຮັບປະກັນຄວາມລັບ, ຄວາມປອດໄພ ແລະ ທັນກັບເວລາ.

**ມາດຕາ 33 ການນຳໃຊ້ກຳລັງສຳຮອງປ້ອງກັນຊາດ**

ການນຳໃຊ້ກຳລັງສຳຮອງ ມີດັ່ງນີ້:

1. ກຳລັງພົນສຳຮອງປະເພດໜຶ່ງ ປະກອບໃຫ້ກຳລັງສູ້ຮົບ, ຮັບປະກັນສູ້ຮົບ ຫຼື ຮັບໃຊ້ສູ້ຮົບຂອງກອງທັບ;

2. ກຳລັງພົນສຳຮອງປະເພດສອງ ປະກອບເປັນກຳລັງຮັບໃຊ້ສະໜາມຮົບ, ເມື່ອມີຄວາມຕ້ອງການທີ່ຈຳເປັນ ອາດຈະປະກອບເຂົ້າເປັນກຳລັງເພື່ອຮັບປະກັນໃນການສູ້ຮົບ ຫຼື ສູ້ຮົບ;

ການນຳໃຊ້ພາຫະນະເຕັກນິກສຳຮອງ ແມ່ນລັດຖະບານເປັນຜູ້ຕົກລົງ, ຕາມການສະເໜີຂອງກະຊວງປ້ອງກັນປະເທດ.

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 34 ຂໍ້ຫ້າມຂອງກຳລັງພົນສຳຮອງປ້ອງກັນຊາດ**

ຂໍ້ຫ້າມຂອງກຳລັງພົນສຳຮອງ ມີດັ່ງນີ້:

1. ຫ້າມຫຼົບຫຼີກ, ປະລະໜ້າທີ່, ລະເມີດຄຳສັ່ງຮຽກເອີ້ນ ແລະ ຄຳສັ່ງປຸກລະດົມເຂົ້າປະຈຳການໃນກອງທັບ;

2. ຫ້າມລະເມີດລະບຽບການກ່ຽວກັບວຽກງານກຳລັງສຳຮອງ, ກົດລະບຽບຂອງກອງທັບ ແລະ ກົດໝາຍຂອງລັດ;

3. ຫ້າມສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ເກີນຂອບເຂດສິດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງຕົນ;

4. ຫ້າມມີພຶດຕິກຳທີ່ສ້າງຄວາມເສຍຫາຍຕໍ່ສຸຂະພາບ, ຊີວິດຂອງບຸກຄົນ, ຊັບສິນຂອງລັດ ແລະ ສັງຄົມ;

5. ຫ້າມເປີດເຜີຍຄວາມລັບທາງການທະຫານ.

**ມາດຕາ 35 ຂໍ້ຫ້າມຂອງອົງການຈັດຕັ້ງ ແລະ ບຸກຄົນອື່ນ**

ຂໍ້ຫ້າມອົງການຈັດຕັ້ງ ແລະ ບຸກຄົນອື່ນ ມີດັ່ງນີ້:

1. ຫ້າມສ້າງຕັ້ງ, ອົບຮົມ-ຫັດແອບ ແລະ ນຳໃຊ້ກຳລັງສຳຮອງປ້ອງກັນຊາດ ໂດຍບໍ່ໄດ້ຮັບອານຸຍາດຈາກກະຊວງປ້ອງກັນປະເທດ;

2. ຫ້າມຂັດຂວາງການປຸກລະດົມ, ອົບຮົມ-ຫັດແອບ ແລະ ການເຄື່ອນໄຫວວຽກງານກຳລັງສຳຮອງ;

3. ຫ້າມທຸກຮູບການທີ່ເປັນການຂັດຂວາງ, ບໍ່ໃຫ້ການຮ່ວມມືກ່ຽວກັບວຽກງານກຳລັງສຳຮອງ.

## ໝວດທີ 8
## ອົງການຄຸ້ມຄອງ ແລະ ກວດກາກໍາລັງສໍາຮອງປ້ອງກັນຊາດ

### ມາດຕາ 36 ອົງການຄຸ້ມຄອງກໍາລັງສໍາຮອງປ້ອງກັນຊາດ

ລັດຖະບານ ຄຸ້ມຄອງວຽກງານກໍາລັງສໍາຮອງ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງປ້ອງກັນປະເທດ ຮັບຜິດຊອບໂດຍກົງ ແລະ ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ, ກະຊວງ ແລະ ອົງການລັດທຽບເທົ່າກະຊວງທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານກໍາລັງສໍາຮອງ.

ອົງການຄຸ້ມຄອງວຽກງານກໍາລັງສໍາຮອງ ປະກອບດ້ວຍ:

1. ກະຊວງປ້ອງກັນປະເທດ;
2. ຄະນະກໍາມະການປ້ອງກັນຊາດ - ປ້ອງກັນຄວາມສະຫງົບຂັ້ນແຂວງ, ກອງບັນຊາການ ທະຫານແຂວງ - ນະຄອນຫຼວງ;
3. ກອງບັນຊາການທະຫານເມືອງ - ນະຄອນ;
4. ອົງການປົກຄອງບ້ານ;
5. ບັນດາກະຊວງ ແລະ ອົງການລັດທຽບເທົ່າກະຊວງ.

### ມາດຕາ 37 ຄວາມຮັບຜິດຊອບຂອງກະຊວງປ້ອງກັນປະເທດ

ກະຊວງປ້ອງກັນປະເທດ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄວ້າ ແລະ ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ແຜນຍຸດທະສາດ, ມະຕິ, ຄໍາສັ່ງ ແລະ ແຜນການຂອງລັດຖະບານ ກ່ຽວກັບວຽກງານກໍາລັງສໍາຮອງ;
2. ຄົ້ນຄວ້າສ້າງແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ, ລັດຖະບັນຍັດ ແລະ ດໍາລັດ ກ່ຽວກັບວຽກງານກໍາລັງສໍາຮອງ ເພື່ອສະເໜີຕໍ່ລັດຖະບານພິຈາລະນາ;
3. ອອກຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາອື່ນ ເພື່ອຊີ້ນໍາ ແລະ ຄຸ້ມຄອງມະຫາພາກກ່ຽວກັບວຽກງານກໍາລັງສໍາຮອງ;
4. ໂຄສະນາເຜີຍແຜ່, ຊີ້ນໍາການຈັດຕັ້ງປະຕິບັດດໍາລັດ ແລະ ບັນດານິຕິກໍາ ກ່ຽວກັບວຽກງານກໍາລັງສໍາຮອງ;
5. ຊີ້ນໍາການຈັດຕັ້ງປະຕິບັດວຽກງານກໍາລັງສໍາຮອງຂອງກອງບັນຊາການທະຫານແຂວງ - ນະຄອນຫຼວງ, ກະຊວງ ແລະ ອົງການລັດທຽບເທົ່າກະຊວງ;
6. ກໍ່ສ້າງບຸກຄະລາກອນ ແລະ ປັບປຸງກົງຈັກຄຸ້ມຄອງຂັ້ນຕ່າງໆກ່ຽວກັບວຽກງານກໍາລັງສໍາຮອງ ໃນຂະແໜງການຂອງຕົນ;
7. ພິຈາລະນາແກ້ໄຂຄໍາສະເໜີ, ຄໍາຮ້ອງ ຂອງພົນລະເມືອງ ກ່ຽວກັບວຽກງານກໍາລັງສໍາຮອງ;
8. ເປັນເຈົ້າການປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ກ່ຽວກັບວຽກງານກໍາລັງສໍາຮອງ;

9. ພົວພັນຮ່ວມມືກັບບັນດາປະເທດເພື່ອນມິດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານກໍາລັງສໍາຮອງ;

10. ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານກໍາລັງສໍາຮອງ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

11. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 38 ຄວາມຮັບຜິດຊອບຂອງຄະນະກໍາມະການປ້ອງກັນຊາດ - ປ້ອງກັນຄວາມ ສະຫງົບຂັ້ນແຂວງ, ກອງບັນຊາການທະຫານແຂວງ - ນະຄອນຫຼວງ**

ຄະນະກໍາມະການປ້ອງກັນຊາດ - ປ້ອງກັນຄວາມສະຫງົບຂັ້ນແຂວງ, ກອງບັນຊາການທະຫານແຂວງ - ນະຄອນຫຼວງ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ - ລັດ, ມະຕິ, ຄໍາສັ່ງ, ຄໍາແນະນໍາ ແລະ ແຜນການຂອງກະຊວງປ້ອງກັນປະເທດ ກ່ຽວກັບວຽກງານກໍາລັງສໍາຮອງ;

2. ໂຄສະນາເຜີຍແຜ່ດໍາລັດ ແລະ ນິຕິກໍາອື່ນ ກ່ຽວກັບວຽກງານກໍາລັງສໍາຮອງ ພາຍໃນແຂວງ ຢ່າງກວ້າງຂວາງ ແລະ ທົ່ວເຖິງ;

3. ຊີ້ນໍາການຈັດຕັ້ງປະຕິບັດວຽກງານກໍາລັງສໍາຮອງ ຂອງຂັ້ນເມືອງ - ນະຄອນ;

4. ເປັນເຈົ້າການປະສານສົມທົບກັບຂະແໜງການອື່ນ ໃນການຈັດຕັ້ງປະຕິບັດວຽກງານກໍາລັງສໍາຮອງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

5. ພົວພັນຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານກໍາລັງສໍາຮອງ ຕາມການມອບ ໝາຍຂອງກະຊວງປ້ອງກັນປະເທດ;

6. ສະຫຼຸບ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກງານກໍາລັງສໍາຮອງ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

7. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 39 ຄວາມຮັບຜິດຊອບຂອງກອງບັນຊາການທະຫານເມືອງ - ນະຄອນ**

ກອງບັນຊາການທະຫານເມືອງ - ນະຄອນ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ - ລັດ, ມະຕິ, ຄໍາສັ່ງ, ຄໍາແນະນໍາ ແລະ ແຜນການຂອງກອງບັນຊາການທະຫານແຂວງ - ນະຄອນຫຼວງ ກ່ຽວກັບວຽກງານກໍາລັງສໍາຮອງ;

2. ເຜີຍແຜ່ດໍາລັດ ແລະ ນິຕິກໍາອື່ນທີ່ກ່ຽວກັບວຽກງານກໍາລັງສໍາຮອງ ຢູ່ຂັ້ນເມືອງ - ນະຄອນ;

3. ຊີ້ນໍາການຈັດຕັ້ງປະຕິບັດວຽກງານກໍາລັງສໍາຮອງ ຂອງບ້ານ;

4. ເກັບກໍາ ແລະ ລາຍງານບັນຊີລາຍຊື່ຈໍານວນພົນທະຫານພັນທະ ທີ່ສິ້ນສຸດການເປັນພັນທະ ແລະ ຈໍານວນພົນກໍາລັງສໍາຮອງ ທີ່ພົ້ນອາຍຸກະສຽນ ໃຫ້ກອງບັນຊາການທະຫານແຂວງ - ນະຄອນຫຼວງ;

5. ຈັດຕັ້ງອົບຮົມ-ຫັດແອບ, ກວດກາຄວາມພ້ອມກຳລັງສຳຮອງ ຕາມແຜນການ;

6. ສະຫຼຸບ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກງານກຳລັງສຳຮອງ ໃຫ້ກອງບັນຊາການທະຫານແຂວງ - ນະຄອນຫຼວງ ຢ່າງເປັນປົກກະຕິ;

7. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ມາດຕາ 40 ຄວາມຮັບຜິດຊອບຂອງອົງການປົກຄອງຂັ້ນບ້ານ

ອົງການປົກຄອງຂັ້ນບ້ານ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ - ລັດ, ມະຕິ, ຄຳສັ່ງ, ຄຳແນະນຳ ແລະ ແຜນການຂອງກອງບັນຊາການທະຫານເມືອງ - ນະຄອນ ກ່ຽວກັບວຽກງານກຳລັງສຳຮອງ;

2. ສຶກສາອົບຮົມພົນລະເມືອງທີ່ມີເງື່ອນໄຂໃຫ້ຕື່ນຕົວ ເຂົ້າຮ່ວມວຽກງານກຳລັງສຳຮອງ;

3. ຂຶ້ນບັນຊີລາຍຊື່ພົນລະເມືອງ ທີ່ສິ້ນສຸດການເປັນທະຫານພັນທະ ແລະ ອອກຮັບອຸດໝູນ ທີ່ມີເງື່ອນໄຂເຂົ້າເປັນກຳລັງສຳຮອງ ສົ່ງໃຫ້ກອງບັນຊາການທະຫານເມືອງ - ນະຄອນ;

4. ປະຕິບັດນະໂຍບາຍຕໍ່ຄອບຄົວ ຂອງກຳລັງພົນສຳຮອງ ໃນເວລາໄປປະຕິບັດໜ້າທີ່ ຕາມຄຳສັ່ງຮຽກເອີ້ນຂອງຂັ້ນເທິງ;

5. ສະຫຼຸບ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກງານກຳລັງສຳຮອງ ໃຫ້ກອງບັນຊາການທະຫານເມືອງ - ນະຄອນ ຢ່າງເປັນປົກກະຕິ;

6. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ມາດຕາ 41 ຄວາມຮັບຜິດຊອບຂອງບັນດາກະຊວງ ແລະ ອົງການລັດທຽບເທົ່າກະຊວງ

ບັນດາກະຊວງ ແລະ ອົງການລັດທຽບເທົ່າກະຊວງ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດແນວທາງນະໂຍບາຍ ແລະ ແຜນຍຸດທະສາດຂອງພັກ, ມະຕິ, ຄຳສັ່ງ, ຄຳແນະນຳ, ແຜນການຂອງ ລັດຖະບານ ແລະ ກະຊວງປ້ອງກັນປະເທດ ກ່ຽວກັບວຽກງານກຳລັງສຳຮອງ;

2. ໂຄສະນາເຜີຍແຜ່ດຳລັດ ແລະ ນິຕິກຳອື່ນ ກ່ຽວກັບວຽກງານກຳລັງສຳຮອງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຢ່າງກວ້າງຂວາງ ແລະ ທົ່ວເຖິງ;

3. ຊີ້ນຳ - ນຳພາຈັດຕັ້ງອົບຮົມ-ຫັດແອບ ແລະ ກວດກາຄວາມພ້ອມກຳລັງສຳຮອງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຕາມການຊີ້ນຳຂອງກະຊວງປ້ອງກັນປະເທດ;

4. ສ້າງແຜນການປຸກລະດົມກຳລັງສຳຮອງ ຢູ່ຂັ້ນຂອງຕົນ ຕາມການຕົກລົງຂອງລັດຖະບານ ແລະ ການສະເໜີຂອງກະຊວງປ້ອງກັນປະເທດ;

5. ຊີ້ນຳ - ນຳພາຈັດຕັ້ງປະຕິບັດການເຕົ້າໂຮມ, ເຄື່ອນຍ້າຍ, ມອບ-ຮັບກຳລັງພົນ ແລະ ພາຫະນະເຕັກນິກສຳຮອງ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃຫ້ກົມກອງກຳລັງປະຈຳການຂອງກອງທັບ;

6. ສຶກສາອົບຮົມ, ກໍ່ສ້າງ - ບຳລຸງ ແລະ ຍົກລະດັບວິຊາການ, ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ກຳລັງສຳຮອງ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເຮັດສຳເລັດໜ້າທີ່ຕາມການມອບໝາຍ;

7. ສະໜອງງົບປະມານ ແລະ ອຳນວຍຄວາມສະດວກ ດ້ານພາຫະນະຮັບໃຊ້, ວັດຖຸອຸປະກອນຕ່າງໆ ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ;

8. ສະຫຼຸບ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກງານກຳລັງສຳຮອງ ໃຫ້ກະຊວງປ້ອງກັນປະເທດ ຢ່າງເປັນປົກກະຕິ;

9. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 42 ອົງການກວດກາກຳລັງສຳຮອງປ້ອງກັນຊາດ**

ອົງການກວດກາວຽກງານກຳລັງສຳຮອງ ປະກອບດ້ວຍ ອົງການກວດກາພາຍໃນ ແລະ ອົງການກວດກາພາຍນອກ:

1. ອົງການກວດກາພາຍໃນ ແມ່ນພາກສ່ວນໜຶ່ງຂອງອົງການຄຸ້ມຄອງວຽກງານກຳລັງສຳຮອງ ຊຶ່ງແມ່ນກະຊວງປ້ອງກັນປະເທດ, ກອງບັນຊາການທະຫານ ແຂວງ - ນະຄອນຫຼວງ ແລະ ກອງບັນຊາການທະຫານ ເມືອງ - ນະຄອນ;

2. ອົງການກວດກາພາຍນອກ ມີສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ - ນະຄອນຫຼວງ, ອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ.

**ມາດຕາ 43 ເນື້ອໃນ ແລະ ຮູບການກວດກາກຳລັງສຳຮອງປ້ອງກັນຊາດ**

**ເນື້ອໃນການກວດກາ ມີດັ່ງນີ້:**

1. ກວດກາຄວາມຮັບຜິດຊອບ ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງວຽກງານກຳລັງສຳຮອງ;

2. ກວດກາການປະຕິບັດດຳລັດ ແລະ ນິຕິກຳອື່ນ ກ່ຽວກັບວຽກງານກຳລັງສຳຮອງ;

3. ກວດກາການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ການນຳໃຊ້ມາດຕະການຕໍ່ຜູ້ທີ່ລະເມີດກົດໝາຍ.

**ຮູບການກວດກາ ມີດັ່ງນີ້:**

1. ກວດກາປົກກະຕິ;

2. ກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ;

3. ກວດກາແບບກະທັນຫັນ.

- ກວດກາປົກກະຕິ ແມ່ນ ການກວດກາຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;
- ກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນການ ໂດຍມີການແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;

- ກວດກາແບບກະທັນຫັນ ແມ່ນ ການກວດກາໂດຍຮີບດ່ວນ ແລະ ບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;

ການກວດກາວຽກງານກຳລັງສຳຮອງ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

## ໝວດທີ 9
## ງົບປະມານ ແລະ ເຄື່ອງແບບຂອງກຳລັງສຳຮອງປ້ອງກັນຊາດ

### ມາດຕາ 44 ງົບປະມານຂອງກຳລັງສຳຮອງປ້ອງກັນຊາດ

ງົບປະມານຮັບໃຊ້ໃນວຽກງານການກໍ່ສ້າງກຳລັງສຳຮອງ ແມ່ນນຳໃຊ້ງົບປະມານຂອງກະຊວງປ້ອງກັນປະເທດ ໂດຍສົມທົບກັບງົບປະມານຂອງອົງການປົກຄອງທ້ອງຖິ່ນ;

ການກໍ່ສ້າງກຳລັງສຳຮອງ ຢູ່ບັນດາກະຊວງ ແລະ ອົງການລັດທຽບເທົ່າກະຊວງ ແມ່ນນຳໃຊ້ງົບປະມານຂອງກະຊວງ ແລະ ອົງການລັດທຽບເທົ່າກະຊວງຕົນເອງ;

ງົບປະມານໃນເວລາປຸກລະດົມ ແລະ ນຳໃຊ້ກຳລັງສຳຮອງ ແມ່ນນຳໃຊ້ງົບປະມານຂອງລັດຖະບານ.

### ມາດຕາ 45 ເຄື່ອງແບບຂອງກຳລັງສຳຮອງປ້ອງກັນຊາດ

ເຄື່ອງແບບຂອງກຳລັງສຳຮອງ ໃນເວລາສ້າງຕັ້ງ, ອົບຮົມ-ຫັດແອບ ແລະ ກວດກາຄວາມພ້ອມ ແມ່ນນຳໃຊ້ຊຸດແຂນຍາວສີຟ້າຂອງພະລະກອນປ້ອງກັນຊາດ ໂດຍແມ່ນກະຊວງປ້ອງກັນປະເທດເປັນຜູ້ສະໜອງໃຫ້;

ໃນເວລາຖືກລະດົມເຂົ້າປະຈຳການໃນກອງທັບ ແມ່ນນຳໃຊ້ເຄື່ອງແບບຂອງກອງທັບ.

## ໝວດທີ 10
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 46 ນະໂຍບາຍຕໍ່ຜູ້ມີຜົນງານ

ກຳລັງສຳຮອງ ຈະໄດ້ຮັບການປະຕິບັດນະໂຍບາຍ ດັ່ງນີ້:

1. ໃນເວລາຮຽກເອີ້ນເຕົ້າໂຮມ, ອົບຮົມ-ຫັດແອບ, ກວດກາຄວາມພ້ອມກຳລັງສຳຮອງ ຈະໄດ້ຮັບການເບິ່ງແຍ່ງຄອບຄົວໃນເວລາເຈັບເປັນ ຫຼື ພົບຄວາມຫຍຸ້ງຍາກ ຈາກອົງການປົກຄອງທ້ອງຖິ່ນ, ອົງການຈັດຕັ້ງສັງຄົມ ແລະ ປະຊາຊົນ;

2. ກຳລັງພົນສຳຮອງປະເພດໜຶ່ງ ທີ່ຖືກບາດເຈັບ, ເສຍອົງຄະ ຫຼື ເສຍຊີວິດ ຍ້ອນປະຕິບັດໜ້າທີ່ຮຽກເອີ້ນເຕົ້າໂຮມ, ປະກາດສ້າງຕັ້ງ, ອົບຮົມ-ຫັດແອບ ແລະ ກວດກາຄວາມພ້ອມ ຈະໄດ້ຮັບການປະຕິບັດນະໂຍບາຍຕາມຊັ້ນເດີມຂອງຜູ້ກ່ຽວ, ສຳລັບກຳລັງພົນສຳຮອງປະເພດສອງ ແມ່ນປະຕິບັດນະໂຍບາຍຕາມຊັ້ນພົນທະຫານຊັ້ນສອງ;

3. ກໍາລັງພົນສໍາຮອງ ທີ່ຖືກລະດົມເຂົ້າປະຕິບັດໜ້າທີ່ປະຈໍາການໃນກອງທັບ ຈະໄດ້ຮັບການປະຕິບັດນະໂຍບາຍຄືກັນກັບທະຫານປະຈໍາການໃນກອງທັບ;

4. ພາຫະນະສໍາຮອງ ທີ່ຖືກລະດົມໄປຮັບໃຊ້ໃຫ້ແກ່ວຽກງານອົບຮົມຫັດແອບ ຫຼື ເຄື່ອນໄຫວປະຕິບັດໜ້າທີ່ສູ້ຮົບ ຖ້າຫາກເປ່ເພເສຍຫາຍ ກໍຈະໄດ້ຮັບການສ້ອມແປງ ຫຼື ຊົດເຊີຍ ຕາມຄວາມເໝາະສົມຕົວຈິງ;

5. ການຈັດຕັ້ງ, ນິຕິບຸກຄົນ ແລະ ບຸກຄົນ ທີ່ໄດ້ປະກອບສ່ວນທາງດ້ານພາຫະນະ, ວັດຖຸປັດໃຈໃນພາວະສົງຄາມ ຫຼື ສຸກເສີນ ຈະໄດ້ຮັບນະໂຍບາຍຍ້ອງຍໍ, ຊົມເຊີຍຕາມຜົນງານຕົວຈິງ.

**ມາດຕາ 47 ມາດຕະການຕໍ່ຜູ້ລະເມີດ**

ການຈັດຕັ້ງ, ນິຕິບຸກຄົນ ແລະ ບຸກຄົນ ທີ່ຊຸກເຊື່ອງ, ປິດບັງ, ຫຼົບຫຼີກ, ຂັດຂວາງຄໍາສັ່ງຮຽກເອີ້ນ, ປຸກລະດົມເຂົ້າປະຈໍາການ ແລະ ຮັບໃຊ້ກອງທັບໃນພາວະສົງຄາມ ຫຼື ສຸກເສີນ ຈະຖືກສຶກສາອົບຮົມ, ກ່າວເຕືອນ ຫຼື ດໍາເນີນຄະດີ ຕາມກົດໝາຍ ແລະ ລະບຽບການ;

ກໍາລັງພົນສໍາຮອງຫາກໄດ້ລະເມີດ ຫຼື ກະທໍາຜິດ ໃນເວລາອົບຮົມ-ຫັດແອບ, ກວດກາຄວາມພ້ອມ ແລະ ເຂົ້າປະຈໍາການໃນກອງທັບ ແມ່ນຈະຖືກກ່າວເຕືອນ, ປະຕິບັດວິໄນ ຫຼື ຖືກລົງໂທດ ຕາມກົດລະບຽບຂອງກອງທັບ ແລະ ກົດໝາຍຂອງລັດ.

## ໝວດທີ 11
## ບົດບັນຍັດສຸດທ້າຍ

**ມາດຕາ 48 ການຈັດຕັ້ງປະຕິບັດ**

ກະຊວງປ້ອງກັນປະເທດ ອອກຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການໃນການຈັດຕັ້ງປະຕິບັດດໍາລັດສະບັບນີ້;

ກອງບັນຊາການທະຫານແຂວງ - ນະຄອນຫຼວງ, ອົງການປົກຄອງຂັ້ນແຂວງ - ນະຄອນຫຼວງ, ບັນດາກະຊວງ ແລະ ອົງການລັດທຽບເທົ່າກະຊວງ ເປັນຜູ້ຊີ້ນໍາການຈັດຕັ້ງປະຕິບັດວຽກງານກໍາລັງສໍາຮອງ ຢູ່ຂັ້ນຂອງຕົນ;

ກອງບັນຊາການທະຫານເມືອງ - ນະຄອນ, ອົງການປົກຄອງຂັ້ນເມືອງ - ນະຄອນ, ບ້ານ ແລະ ຜູ້ບັນຊາກໍາລັງສໍາຮອງ ເປັນຜູ້ຈັດຕັ້ງປະຕິບັດຕົວຈິງ ວຽກງານກໍາລັງສໍາຮອງ.

**ມາດຕາ 49 ຜົນສັກສິດ**

ດໍາລັດສະບັບນີ້ ມີຜົນສັກສິດນັບແຕ່ວັນນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ລົງລາຍເຊັນ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

**ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**